**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ຄັງເງິນແຫ່ງລັດ

ເລກທີ 1409 /ຄງລ

ນະຄອນຫຼວງວຽງຈັນ, ວັນທີ 27 ພຶດສະພາ 2026

# ແຈ້ງເຊີນ

## ເຂົ້າຮ່ວມຊື້ຊອງປະມູນທາບທາມລາຄາ ວັດຖຸປະກອນຮັບໃຊ້ວຽກງານວິຊາສະເພາະ ປະຈໍາປີ 2026

**ເຖິງ:** ບັນດາ ບໍລິສັດ, ຫ້າງຮ້ານ.......................................................................................

ທີ່ນະຄອນຫຼວງວຽງຈັນ

- **ເນື້ອໃນກິດຈະກໍາ:** ການຈັດຊື້ ວັດຖຸປະກອນຮັບໃຊ້ວຽກງານວິຊາສະເພາະ ຂອງຄັງເງິນແຫ່ງລັດ
- **ແຫຼ່ງທຶນ:** ເງິນລາຍຮັບຄ່າບໍລິການທາງດ້ານວິຊາການ ຂອງຄັງເງິນແຫ່ງລັດ

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 030/ກງ, ລົງວັນທີ 2 ທັນວາ 2017;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄັງເງິນແຫ່ງລັດ ສະບັບເລກທີ 2888/ກງ, ລົງວັນທີ 09 ກັນຍາ 2025;
- ອີງຕາມ ການຄົ້ນຄ້ວາເຫັນດີເປັນເອກະພາບຂອງຄະນະນໍາຄັງເງິນແຫ່ງລັດ ຄັ້ງວັນທີ 18 ພຶດສະພາ 2026.

ຄັງເງິນແຫ່ງລັດ ຂໍຖືເປັນກຽດແຈ້ງໃຫ້ທ່ານຊາບວ່າ: ປະຈຸບັນຄັງເງິນແຫ່ງລັດ ໄດ້ມີແຜນຈັດຊື້ ວັດຖຸປະກອນຮັບໃຊ້ວຽກງານວິຊາສະເພາະ ປະເພດຄອມພິວເຕີ ແລະ ເຄື່ອງຮັບໃຊ້ ວຽກງານທັນເປັນທັນສະໄໝຂອງຂະແໜງຄັງເງິນໃນຂອບເຂດທົ່ວປະເທດ ໂດຍນໍາໃຊ້ງົບປະມານບ້ວງເງິນລາຍຮັບຄ່າບໍລິການທາງດ້ານວິຊາການ ຂອງຄັງເງິນແຫ່ງລັດ.

ດັ່ງນັ້ນ, ຈຶ່ງແຈ້ງຈຸດປະສົງ ແລະ ຂໍຄວາມຮ່ວມມືຈາກຜູ້ດໍາເນີນທຸລະກິດ ກ່ຽວກັບວຽກງານດັ່ງກ່າວ ທີ່ມີຄວາມສົນໃຈເຂົ້າຮ່ວມການແຂ່ງຂັນລາຄາຄັ້ງນີ້, ສະເໜີທ່ານ ເຂົ້າມາພົວພັນລາຍລະອຽດ ແລະ ສົ່ງໃບແຈ້ງລາຄາເຂົ້າຮ່ວມ ຕາມລາຍການທີ່ຕ້ອງການສົມທຽບລາຄາ ທີ່ຄັດຕິດມາພ້ອມນີ້ ແລະ ໃຫ້ປະຕິບັດຕາມບົດແນະນໍາ ແລະ ເງື່ອນໄຂຂອງຜູ້ທີ່ຈະເຂົ້າຮ່ວມການສະເໜີລາຄາ ລາຍລະອຽດ ດັ່ງນີ້:

1. ໃບທະບຽນວິສາຫະກິດ ທີ່ຂະແໜງການກ່ຽວຂ້ອງອອກອະນຸຍາດນໍາໃຊ້ໄດ້ ໃນປະຈຸບັນ;
2. ໃບອະນຸຍາດດໍາເນີນທຸລະກິດ ທີ່ຂະແໜງການກ່ຽວຂ້ອງອອກອະນຸຍາດນໍາໃຊ້ໄດ້ ໃນປະຈຸບັນ;
3. ໃບຢັ້ງຢືນການມອບພັນທະອາກອນ ທີ່ຂະແໜງສ່ວຍສາອາກອນບ່ອນຕົນຂຶ້ນກັບ ອອກອະນຸຍາດນໍາໃຊ້ໄດ້ປະຈຸບັນ;
4. ເອກະສານຢັ້ງຢືນການປະຕິບັດພັນທະຕ່າງໆ ຢ່າງເປັນປົກກະຕິ ຫຼື ຈົນເຖິງປະຈບັນ;
5. ໃບຢັ້ງຢືນຖານະການເງິນ ຈາກທະນາຄານ ກໍານົດໄລຍະ 03 ເດືອນ;
6. ປະກອບເອກະສານປະມູນ ຕາມແບບຟອມສະເໜີລາຄາ ໃຫ້ສອດຄ່ອງກັບ ລະບຽບການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ (ມູນຄ່າສະເໜີຕ້ອງລວມມີອາກອນພ້ອມ);

7. ໃບສະເໜີລາຄາ ບໍ່ໃຫ້ມີບ່ອນເປິເປື້ອນ, ບໍ່ມີຮອຍຂີດຂ້າ, ຮອຍລຶບ ຫຼື ແປງຕົວເລກແຕ່ຢ່າງໃດ, ເຊັນຢັ້ງຢືນ ແລະ ຈ້ຳກາຮ້ານທີ່ກ່ຽວຂ້ອງ;
8. ພິວພັນຮັບເອກະສານລະບຽບການປະມູນ ກັບພະແນກຈັດຕັ້ງ, ບໍລິຫານ ແລະ ການເງິນ ພາຍຫຼັງຄັງເງິນແຫ່ງລັດ ໄດ້ອອກແຈ້ງການເຊີນເຂົ້າຮ່ວມການປະມູນ;
9. ພາຍຫຼັງປະກອບເອກະສານຕາມເງື່ອນໄຂທີ່ລະບຸໄວ້ຂໍ້ 1 ຫາ 7 ຮຽບຮ້ອຍແລ້ວ, ໃຫ້ເອົາເອກະສານທັງໝົດ ໃສ່ໃນຊອງປະມູນ ພ້ອມທັງ ຕິດກາວ ແລະ ຈ້ຳຕາປະທັບຂອງຮ້ານໃສ່ດ້ານນອກຊອງ, ຫຼັງຈາກນັ້ນ ໃຫ້ຜູ້ອຳນວຍການ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບສິດນຳຊອງເອກະສານດັ່ງກ່າວເຂົ້າມາຮ່ວມເປີດຊອງປະມູນສົມທຽບລາຄາ ຕາມວັນ, ເວລາ ທີ່ຄະນະຮັບຜິດຊອບການຈັດຊື້-ຈັດຈ້າງ ຂອງຄັງເງິນແຫ່ງລັດ (ວັນເວລາ ຈະແຈ້ງຕື່ມພາຍຫຼັງ);
10. ຮ້ານທີ່ຊະນະການປະມູນ ຕ້ອງສະໜອງການບໍລິການໃຫ້ແກ່ຄັງເງິນແຫ່ງລັດ ຕາມເງື່ອນໄຂທີ່ລະບຸໄວ້ໃນສັນຍາການຊື້-ຂາຍ.

ໝາຍເຫດ:

- ຖ້າຫ້າງຮ້ານໃດ ຫາກປະກອບເອກະສານບໍ່ຖືກຕ້ອງຄົບຖ້ວນຕາມຂໍ້ແນະນຳແກ່ຜູ້ທີ່ຈະຮ່ວມສະເໜີແຈ້ງລາຄາຂ້າງເທິງນີ້ແລ້ວ ຈະບໍ່ຖືກພິຈາລະນາ ແລະ ຈະບໍ່ອ່ານລາຄາຊ່ອງໜ້າຄະນະກຳມະການສົມທຽບລາຄາແຕ່ຢ່າງໃດ, ຖືວ່າໝົດສິດໃນການປະມູນ;
- ແຜນຄວາມຕ້ອງການທີ່ຈະຈັດຊື້-ຈັດຈ້າງ ໃນຄັ້ງນີ້ໄດ້ຄັດຕິດມາພ້ອມນີ້.

ຫວັງວ່າ, ທ່ານຄົງໃຫ້ຄວາມຮ່ວມມື ແລະ ສະເໜີລາຄາໃນການປະມູນຄັ້ງນີ້ດ້ວຍ.

ຫົວໜ້າຄັງເງິນແຫ່ງລັດ

ກະຊວງການເງິນ ຄັງເງິນແຫ່ງລັດ

ນ. ບົວເລິງຄິນ ດວງສະຫວັນ